# ບົດຮຽນໂຮງຮຽນວັນອາທິດ
## ວັນອາທິດ ທີ່ 14 ກຸມພາ 2010 (14-2-2010)

---

## ຈະເຮັດວິທີໃດຈຶ່ງຈະປ່ຽນໃຈທ່ານໄດ້?

**ຂໍ້ພຣະຄັມພີໃນບົດຮຽນ:** ຟີລິບປອຍ 3:2-15; 4:8

### ຜົນສະທ້ອນຕໍ່ຊີວິດ

ບົດຮຽນນີ້ຈະຊ່ວຍໃຫ້ທ່ານວາງຄຸນຄ່າຂອງການຮູ້ຈັກກັບພຣະຄຣິດສູງກວ່າທຸກສິ່ງ ແລະອຸດທິດຕົນສແວງຫາວິທີຂອງຄວາມນຶກຄິດທີ່ຈະພາໃຫ້ເກີດການເຕີບໂຕຝ່າຍວິນຍານ.

### ເປົ້າໝາຍຂອງບົດຮຽນ

ບົດຮຽນນີ້ຈົດຈໍ່ໃສ່ການເຕີບໂຕໃນຄວາມສັມພັນກັບພຣະຄຣິດ ປ່ຽນແປງການວາງຄຸນຄ່າ ແລະຄວາມຄິດຂອງບຸກຄົນ.

### ຄວາມສຳຄັນຂອງບົດຮຽນ

ໃນປີ 2007, ກຸ່ມຄົ້ນຄວ້າທີ່ເຮັດປຶ້ມ ລາຍຟ໌ເວ (LifeWay Research) ໄດ້ສຳຣວດຜູ້ໃຫຍ່ຊາວອະເມຣິກັນທີ່ຢູ່ໃນກຸ່ມໂປຣແຕສຕັງທີ່ໄປໂບດເດືອນລະຄັ້ງຫລືຫລາຍກວ່ານັ້ນຈຳນວນ 2500 ຄົນ. ມີແຕ່ 36% ຕອບມາວ່າ "ຂ້າພະເຈົ້າຂໍຕອບຕົງໆວ່າໄດ້ພະຍາຍາມຍົກເອົາພຣະເຈົ້າເປັນນ້ຳເບີນຶ່ງໃນຊີວິດ." ບົດຮຽນນີ້ສຳຄັນຫລາຍເພາະວ່າການທີ່ຮູ້ຈັກກັບພຣະເຈົ້າໃຫ້ດີຂຶ້ນນັ້ນຄວນເປັນເປົ້າໝາຍສຳລັບຄຣິສຕຽນທຸກໆຄົນ. ຄວາມຮູ້ສຶກກັບການຮູ້ພຣະເຈົ້າໃຫ້ດີຂຶ້ນນີ້ຄວນສະທ້ອນເຖິງການເຫັນຄຸນຄ່າ, ສິ່ງສຳຄັນໃນຊີວິດ, ແນ່ນອນແມ່ນການໃຊ້ຄວາມຄິດຂອງພວກເຮົາ.

### ການສຶກສາພຣະຄັມພີ

ອິນເທີແນັດ ເປັນທົນທາງແລກປ່ຽນຂໍ້ມູນຕ່າງໆທາງສ່ວນຕົວໄດ້ຫລາຍວິທີ, ສະນັ້ນ ຄົນທັງຫລາຍທຸກໆລຸ້ນຈຶ່ງໃຊ້ເວລາຫລາຍຊົ່ວໂມງປ່ຽນແປງ ແລະແບ່ງປັນຂ່າວສິ່ງຕ່າງໆໃນຊີວິດຂອງຕົນເອງ ຫລືກວດເບິ່ງຂ່າວຕ່າງໆ ທີ່ເພື່ອນໆ ໄດ້ປະກາດໄວ້. ຢາກຮູ້ຢູ່ວ່າ ຖ້າພຣະຄຣິດມີບ່ອນຂອງພຣະອົງຢູ່ໃນອິນເທີແນັດນັ້ນຈະມີຄົນຮູ້ຈັກພຣະອົງດີຂຶ້ນຫລາຍປານໃດ. ໃນຂນະທີ່ທ່ານຮຽນບົດຮຽນນີ້ ຈົ່ງຖາມຕົວເອງເບິ່ງດູວ່າທ່ານໃຫ້ຄຸນຄ່າກັບການຮູ້ຈັກກັບພຣະຄຣິດນັ້ນສູງກວ່າທຸກສິ່ງບໍ? ຖ້າວ່າເປັນຄຳຕອບທີ່ຕົງກັນຂ້າມ ຈົ່ງຕຽມຕົວພ້ອມທີ່ຈະປ່ຽນຈິດໃຈແລະຕິດຕາມທາງຂອງຄວາມຄິດທີ່ຈະນຳພາໃຫ້ເກີດຄວາມເຕີບໂຕຝ່າຍຈິດວິນຍານ.

### 1. <u>ຢ່າອາສັຍປະຫວັດຊີວິດອັນດີຂອງຕົວເອງ:</u> ຟີລິບປອຍ 3:2-6

ຫລັງຈາກການປ່ຽນແປງຊີວິດອັນອັສຈັນຕາມທົນທາງໄປເມືອງດາມາເຊ, ອາຈານໂປໂລໄດ້ອຸດທິດຕົນເອງອອກປະກາດໃຫ້ຄົນອື່ນຮູ້ກ່ຽວກັບພຣະຄຣິດ. ທ່ານໄດ້ປະເຊີນໜ້າສູ້ກັບຄວາມຕໍ່ຕ້ານຈາກພວກທີ່ຈະເພີ້ມເຂົ້າກັບຈຳນວນຄົນທີ່ຮັບໃຊ້ງານຂອງໄມ້ກາງແຂນ ຫລືຜູ້ທີ່ຈະລົບລ້າງຄວາມເປັນພຣະເຈົ້າຂອງພຣະອົງ(ພຣະຄຣິດ). ອາຈານ

ໂປໂລໄດ້ເຕືອນຊາວຄຣິສຕຽນທີ່ເມືອງຟີລິບປອຍໃຫ້ລະວັງຜູ້ຮັບໃຊ້ຜີມານ ຫລືພວກຢູດາຍ. ພວກນີ້ໄດ້ສອນວ່າຄົນຕ່າງຊາດຕ້ອງເປັນຄົນຢິວກ່ອນພວກເຂົາຈະກາຍເປັນຄຣິສຕຽນ. ພວກເຂົາເພີ້ມວຽກງານໃສ່ພາຣະກິດຂອງພຣະຄຣິດໂດຍອ້າງວ່າພິທີຕັດເປັນການຈຳເປັນຕໍ່ຄວາມພົ້ນ, ດ້ວຍເຫດນີ້ອາຈານໂປໂລຈຶ່ງວ່າພວກນີ້ເປັນພວກທຳຄວາມປິ່ນປີ້ທຳລາຍເນື້ອໜັງ. ພວກນີ້ຈະຕິດຕາມທ່ານໄປທຸກໆບ່ອນເໝືອນກັນກັບໂຕໝາ ພວກເຂົາໄດ້ເທົ່າສິ່ງຄວາມໝາຍຂອງຫລັກຄວາມເຊື່ອທີ່ຕ້ານກັບຄວາມພົ້ນດ້ວຍພຣະຄຸນທີ່ຜ່ານທາງຄວາມເຊື່ອໃນພຣະຄຣິດ.

ໃນພຣະຄັມພີເດີມ, ພິທີຕັດເປັນເຄື່ອງໝາຍທີ່ຕັ້ງໄວ້ເພື່ອແຍກເອົາຄົນຢິວອອກຈາກຄົນຕ່າງຊາດ. ຫລັງຈາກພຣະເຢຊູຄຣິດ, ພິທີຕັດນັ້ນບໍ່ມີຄວາມຈຳເປັນອີກແລ້ວ. ຜູ້ທີ່ໄດ້ວາງໃຈມີຄວາມເຊື່ອໃນພຣະຄຣິດນັ້ນ ພຣະອົງໄດ້ທຳພິທີຕັດຫົວໃຈໃຫ້ແລ້ວ (ກລຊ 2:11-12).

ພວກຢູດາຍ ໄດ້ວາງຄວາມໝັ້ນໃຈໄວ້ກັບຖານະຊື່ສຽງ ແລະຄວາມສຳເຣັດຜົນສ່ວນຕົວທາງສາສນາ ພວກເຂົາໄດ້ເຊື່ອແບບຜິດທີ່ວ່າຄວາມພຽນພະຍາຍາມ ແລະພິທີທາງສາສນາຈະນຳໄປເຖິງຄວາມພົ້ນໄດ້. ອາຈານໂປໂລໄດ້ໄລ່ຄຸນງາມຄວາມດີທີ່ທ່ານມີ ແລະໄດ້ທຳໃນຊີວິດຂອງທ່ານໃນເວລາທີ່ທ່ານເຄີຍເປັນເໝືອນພວກເຂົາມາກ່ອນຕາມມາດຕະຖານຂອງພວກເຂົາໃຫ້ເຂົາຟັງ. ເຖິງຢ່າງໃດກໍຕາມ, ທ່ານຮຽນຮູ້ວ່າປວັດຫຍໍ້ອັນດີງາມຂອງທ່ານນັ້ນ ມັນກັບບັງຕາບໍ່ໃຫ້ທ່ານຮູ້ຈັກກັບພຣະເຈົ້າ. ທຸກຄົນທີ່ອາສັຍຄຸນຄວາມດີງາມທາງສາສນາຈະພົບກັບຄວາມຜິດຫວັງ.

ເໝືອນກັນກັບພວກຢູດາຍ, ຜູ້ທີ່ຖືສາສນາເຄັ່ງຄັດຫລາຍຄົນໃນປັດຈຸບັນກໍຄວນມີປະສົບການປ່ຽນແປງຄວາມຄິດຂອງເຂົາເຈົ້າ. ເບິ່ງແລ້ວກໍເປັນການອວດຕົວຫລາຍທີ່ນຶກເຫັນພາບພວກເຮົາຢືນຢູ່ຕໍ່ໜ້າພຣະພັກຂອງພຣະເຈົ້າ ແລະຫວັງວ່າປວັດອັນດີທາງສາສນາຂອງເຮົາຈະເຮັດໃຫ້ພຣະເຈົ້າພໍພຣະທັຍນຳເຮົາ. ຖ້າວ່າການທຳຕາມພຣະບັນຍັດ, ເຮັດຄວາມດີ, ແລະສ້າງປວັດຫຍໍ້ທີ່ຈົບງາມ ເປັນວິທີທີ່ໃຫ້ມະນຸດຄືນດີກັບພຣະເຈົ້າໄດ້ ແລ້ວພຣະຄຣິດກໍຕາຍໂດຍເປົ່າປໂຍດ.

## 2. <u>**ທຳຄວາມຮູ້ຈັກກັບພຣະເຢຊູ:**</u> ຟີລິບປອຍ 3:7-9

ການທີ່ອາຈານໂປໂລໄດ້ພົບກັບພຣະຄຣິດ ໄດ້ນຳພາໃຫ້ທ່ານຄິດໃໝ່ອີກໃນການຮໍ່າຮຽນກັບພຣະຄັມພີເດີມແຕ່ກ່ອນນັ້ນກ່ຽວກັບການຖືກຄຶງແລະການຄືນມາຂອງພຣະເຢຊູ. ທ່ານໄດ້ຮຽນຮູ້ອີກວ່າການຢືນຢູ່ຢ່າງຖືກຕ້ອງໃນພຣະເຈົ້ານັ້ນໄດ້ມາຈາກຄວາມຕ້ອງການຂອງພຣະເຈົ້າ ແລະດ້ວຍຄວາມເຊື່ອໃນພຣະຄຣິດ. ແລ້ວອາຈານໂປໂລກໍໄດ້ເຂົ້າໃຈອີກວ່າທຸກໆສິ່ງທີ່ທ່ານເຄີຍຄິດວ່າມີປໂຍດກັບກາຍເປັນສິ່ງໃຊ້ບໍ່ໄດ້ທີ່ຈະຊ່ວຍໃຫ້ທ່ານຮັບຄວາມຊອບທັມໃນພຣະຄຣິດ. ທ່ານໄດ້ປ່ອຍປະຄວາມໄວ້ວາງໃຈໃນສິ່ງທີ່ເປັນຝ່າຍເນື້ອໜັງ, ການປະຕິບັດພິທີກັມຕ່າງໆ ແລະໄດ້ໂຍນປວັດຫຍໍ້ອັນຈົບງາມທາງສາສນານັ້ນລົງກະຖັງຂີ້ເຫຍື້ອ.

ອາຈານໂປໂລໄດ້ຮັບຮູ້ຄຸນຄ່າອັນສູງສົ່ງຂອງການຮູ້ຈັກກັບພຣະຄຣິດ, ທຸກໆສິ່ງທີ່ທ່ານເຄີຍໃຫ້ຄຸນຄ່າມາທ່ານຖືວ່າເປັນການເສັຽຫາຍເມື່ອປຽບໃສ່ກັບການຮູ້ຈັກກັບພຣະຄຣິດ. ທ່ານໄດ້ນັບທຸກໆສິ່ງທີ່ທ່ານເສັຽໄປວ່າເປັນສູນ (ເລກສູນ)ທີ່ຈະປຽບກັບສິ່ງທີ່ທ່ານໄດ້ຮັບໃໝ່.

ຂ້າພະເຈົ້າຮູ້ວ່າຜູ້ເຊື່ອຫລາຍຄົນອາສັຍຢູ່ດິນແດນທີ່ກຽດຊັງຂ່າວປະເສີດຂອງພຣະເຢຊູຄຣິດ. ສິ່ງທີ່ໜູນໃຈຂ້າພະເຈົ້າທີ່ສຸດຄືສິ່ງທີ່ພວກເຂົາຍອມແລກປ່ຽນເອົາໂອກາດຂອງການຮູ້ຈັກ ແລະຕິດຕາມພຣະຄຣິດ. ຊີວິດຂອງພວກເຂົາເປັນພະຍານເຖິງຄວາມກ້າວໜ້າອັນຍິ່ງໃຫຍ່ຂອງການຮູ້ຈັກກັບພຣະຄຣິດ ແລະເຖິງຄວາມຈິງທີ່ວ່າສິ່ງທີ່ເຂົາໄດ້ຮັບນັ້ນມີຄຸນຄ່າເກີນກວ່າສິ່ງທີ່ພວກເຂົາໄດ້ເສັຽໄປ.

ການຮູ້ຈັກກັບພຣະຄຣິດນັ້ນບໍ່ແມ່ນພຽງແຕ່ໄດ້ຮັບຂໍ້ມູນຄວາມຈິງກ່ຽວກັບພຣະອົງເທົ່ານັ້ນ, ແຕ່ແມ່ນການເຕີບໃຫຍ່, ປະສົບການສ່ວນຕົວກັບພຣະອົງທີ່ດັດແປງການຫລຽວເບິ່ງຊີວິດທັງໝົດ. ວິທີດຽວທີ່ພວກເຮົາຈະກາຍເປັນ

ຜູ້ທີ່ຮູ້ຈັກກັບພຣະເຢຊູດີຂຶ້ນນັ້ນແມ່ນການໃຊ້ເວລາຮ່ຳຮຽນພຣະຄຳພີ. ພວກເຮົາຕ້ອງຮູ້ຈັກກັບພຣະຄຣິດໃຫ້ດີ ພວກເຮົາຈຶ່ງຈະບໍ່ຕົກເປັນເຫຍື່ອຂອງຜູ້ສອນປອມ.

ກ່ອນການປ່ຽນແປງຊີວິດ, ອາຈານໂປໂລເຄີຍຄິດວ່າຄວາມຊອບທັມຂອງຕົນເອງ ແລະຊື່ສຽງທາງສາສນານັ້ນພຽງພໍທີ່ຈະນຳພາເພິ່ນໄປເຖິງພຣະເຈົ້າ. ຫລັງຈາກການປ່ຽນແປງຊີວິດ, ຄວາມຄິດຂອງອາຈານໂປໂລໄດ້ຮັບການປ່ຽນແປງຄັ້ງຍິ່ງໃຫຍ່. ຄວາມປາຖນາອັນແຮງກ້າຂອງເພິ່ນຄືຢູ່ໃນພຣະຄຣິດ, ບໍ່ແມ່ນອາສັຍຄວາມຊອບທັມຂອງຕົນເອງ, ແຕ່ເປັນຄວາມຊອບທັມທີ່ເກີດຈາກການວາງໃຈເຊື່ອໃນພຣະຄຣິດຢ່າງດຽວເພື່ອໃຫ້ເຖິງຄວາມພົ້ນ. ຄືກັນກັບອາຈານໂປໂລ, ພວກເຮົາຄວນອາສັຍຢູ່ໃນພຣະອົງທຸກໆເວລາ.

## 3. <u>ໂນ້ມຕົວໄປຫາແນວຄິດແບບຜູ້ໃຫຍ່</u>: ຟີລິບປອຍ 3:10-15; 4:8

ຄວາມຕ້ອງການອັນເລິກເຊິ່ງຂອງອາຈານໂປໂລແມ່ນໃຫ້ຮູ້ຈັກກັບພຣະຄຣິດຢ່າງໃກ້ຊິດທີ່ສຸດ, ທ່ານຕ້ອງການໃຊ້ຊີວິດແຕ່ລະວັນຢູ່ໃນຣິດອຳນາດຂອງພຣະວິນຍານບໍຣິສຸດ ຜູ້ທີ່ຍົກພຣະເຢຊູຂຶ້ນມາຈາກຄວາມຕາຍ. ທ່ານຍັງພໍໃຈ ຕ້ອງການຮ່ວມທຸກເພື່ອພຣະຄຣິດ ຜູ້ທີ່ໄດ້ທຸກທໍຣະມານເພື່ອທ່ານເອງ. ອາຈານໂປໂລກໍເຄີຍໄດ້ຜ່ານການທົນທຸກມາຫລາຍຄັ້ງເພື່ອເຫັນແກ່ຂ່າວປະເສີດ, ແລະທ່ານເຄີຍເວົ້າເຖິງຄວາມຕ້ອງການຢາກເປັນເໝືອນກັນກັບພຣະຄຣິດໃນຄວາມຕາຍຂອງພຣະອົງດ້ວຍ ແມ່ນສິ່ງທີ່ທ່ານໄດ້ກະທຳທຸກວັນຄືຕາຍຕໍ່ທັມມະຊາດຂອງຄວາມບາບ ແລະຄວາມຕ້ອງການທາງສ່ວນຕົວ.

ອາຈານໂປໂລໄດ້ເຂົ້າໃຈວ່າການຮູ້ຈັກກັບພຣະຄຣິດ ແລະກາຍເປັນເໝືອນພຣະຄຣິດນັ້ນເປັນການກະທຳທີ່ດຳເນີນຕໍ່ໄປຕລອດຊີວິດ. ຜູ້ເຊື່ອທຸກຄົນທີ່ມີຄວາມຕັ້ງໃຈຢາກໄປເຖິງຄວາມເປັນຜູ້ໃຫຍ່ຝ່າຍວິນຍານຕ້ອງຕັ້ງໝັ້ນຢູ່ກັບນິສັຍທີ່ມຸ້ງໝັ້ນໄປຫາເປົ້າໝາຍຂອງການຮູ້ຈັກກັບພຣະຄຣິດໃຫ້ດີຍິ່ງໆຂຶ້ນແບບອາຈານໂປໂລ.

ໃນຂນະທີ່ອາຈານໂປໂລພໍໃຈນຳພຣະຄຣິດ ທ່ານບໍ່ເຄີຍພໍໃຈນຳຊີວິດຄຣິສຕຽນໃນຕົວທ່ານເອງ. ສະນັ້ນ, ທ່ານຕັ້ງໃຈເປັນຄົນທີ່ຍັງໄປບໍ່ເຖິງຈຸດໝາຍເທື່ອ. ທ່ານມີຄວາມຈົດຈໍ່ໃສ່ຈຸດດຽວ--ເພື່ອໄປໃຫ້ເຖິງ ຫຼືອຽງຕົວມຸ່ງໜ້າໄປເໝືອນກັນກັບນັກກິລາຢູ່ໃນການແຂ່ງຂັນ. ທ່ານປັກຕາໃສ່ຫລັກຊັຍຂອງການເປັນຜູ້ໃຫຍ່ຝ່າຍວິນຍານ--ຮູ້ຈັກກັບພຣະຄຣິດ ແລະໄປເຖິງຫລັກຊັຍທີ່ໄດ້ຕັ້ງໄວ້ໃຫ້ທ່ານ, ທ່ານບໍ່ໄດ້ປ່ອຍໃຫ້ສິ່ງໃດມາຂວາງໜ້າການໄປເຖິງຫລັກຊັຍ.

ອາຈານໂປໂລໄດ້ໜູນໃຈໃຫ້ເພື່ອນຂອງເພິ່ນໃນເມືອງຟີລິບປອຍ ໃຫ້ກ້າວໄປສູ່ຄວາມຄິດແບບເປັນຜູ້ໃຫຍ່. ຜູ້ທີ່ມີຄວາມຄິດເປັນຜູ້ໃຫຍ່ແລ້ວກໍມີຄວາມຮູ້ສຶກເຕືອນໂຕເອງກ່ຽວກັບການທີ່ບໍ່ມີຄວາມສົມບູນໃນຕົວເອງ ແລະເຫັນຄວາມຈຳເປັນເພື່ອຊອກສແວງຫາຄວາມກ້າວໜ້າໃຫ້ເປັນເໝືອນກັບພຣະເຢຊູໃຫ້ຫລາຍຂຶ້ນ. ອາຈານໂປໂລໄດ້ມີຄວາມເປັນຫ່ວງເຖິງຜູ້ທີ່ມີຄວາມເຊື່ອແລ້ວໄດ້ປ່ອຍໃຫ້ຄວາມຄິດທີ່ຜິດນຳພາການພັທນາຄວາມປະພຶດຂອງຕົນເອງ. ສຳລັບຄົນເຫຼົ່ານີ້, ທ່ານມີຄວາມຫວັງວ່າພຣະເຈົ້າຈະເປີດເຜີຍຄວາມຈິງໃຫ້ພວກເຂົາເຈົ້າຮູ້.

**ການໃຫ້ຈິດໃຈຂອງເຮົາເຕັມໄປດ້ວຍພຣະຄຳຂອງພຣະເຈົ້າຈະຊ່ວຍໃຫ້ພວກເຮົາມຸ່ງໜ້າໄປເຖິງການມີຄວາມຄິດເປັນແບບຜູ້ໃຫຍ່ ແລະຕັ້ງໝັ້ນຢູ່ໃນສິ່ງທີ່ເປັນຈິງ, ມີກຽດ, ຍຸດຕິທັມ, ບໍຣິສຸດ, ໜ້າຮັກ, ແລະ ໜ້າຍິນດີ.**

ເປົ້າໝາຍຂອງອາຈານໂປໂລກໍຄືການມຸ່ງໜ້າໄປຫາຄວາມເປັນຜູ້ໃຫຍ່ໃນພຣະຄຣິດ. ເພາະວ່າຄວາມຄິດຂອງເຮົາມີສ່ວນນຳພາໃນການໃຊ້ຊີວິດ ແລະການສະແດງຕົວເຮົາກັບຄົນອື່ນ, ອາຈານໂປໂລຈຶ່ງຊັກຊວນຜູ້ທີ່ເຊື່ອຢູ່ໃນເມືອງຟີລິບປອຍໃຫ້ເອົາຄວາມຄິດທີ່ພໍພຣະທັຍພຣະເຈົ້າເຂົ້າໄປໃນຈິດໃຈ ແລະສິ່ງນີ້ຈະນຳພວກເຮົາດຳເນີນໄປຫາການເປັນເໝືອນພຣະຄຣິດ. ຄວາມຄິດທີ່ຖືກຕ້ອງນັ້ນບໍ່ໄດ້ເກີດຂຶ້ນໂດຍບັງເອີນ ແຕ່ເປັນຈາກການເອົາພຣະຄຳຂອງ ພຣະເຈົ້າເຂົ້າໄປໃນຫົວຈິດຫົວໃຈຂອງຕົນໃຫ້ເຕັມ (ພສສ 19:7-9; 119:9-6). ວິທີນີ້ເປັນການພັທນາຄວາມຄິດອັນໃໝ່ ທີ່ຈະນຳມີຜົນຂອງການໃຊ້ຊີວິດ ແລະການຫລຽວເບິ່ງຊີວິດຕາມແບບແນວທາງຂອງພຣະຄຳພີ. ການໃຫ້

ຈິດໃຈຂອງເຮົາເຕັມໄປດ້ວຍພຣະຄຳຂອງພຣະເຈົ້າຈະຊ່ວຍໃຫ້ພວກເຮົາມຸ່ງໜ້າໄປເຖິງການມີຄວາມຄິດເປັນແບບຜູ້ໃຫ່ຍ ແລະຕັ້ງໝັ້ນຢູ່ໃນສິ່ງທີ່ເປັນຈິງ, ມີກຽດ, ຍຸຕິທັມ, ບໍຣິສຸດ, ໜ້າຮັກ, ແລະ ໜ້າຍິນດີ.

## ບົດຮຽນຊີວິດ:

ບົດຮຽນນີ້ຈົດຈໍ່ໃສ່ວິທີຊ່ວຍປ່ຽນແປງແນວຄິດເຮົາສາມວິທີ. ຂັ້ນທຳອິດ, ພວກເຮົາບໍ່ຕ້ອງອາສັຍຄວາມສຳເຣັດພົນຝ່າຍວິນຍານ. ສອງ, ພວກເຮົາຈຳເປັນຕ້ອງໃຊ້ຊີວິດທີ່ເຫຼືອຢູ່ໃຫ້ຮຽນຮູ້ກັບພຣະເຢຊູ. ແລ້ວ, ພວກເຮົາຈຶ່ງຈະມຸ່ງໜ້າໄປຫາວິທີການຄິດແບບຜູ້ໃຫ່ຍ. ນີ້ແມ່ນບາງວິທີທີ່ພວກເຮົາສາມາດເຮັດເພື່ອໃຫ້ຮູ້ຈັກກັບພຣະເຢຊູດີຂຶ້ນ.

1. ຕັ້ງເປົ້າໝາຍໄວ້ເພື່ອໃຫ້ຮູ້ຈັກກັບພຣະເຢຊູຢ່າງໃກ້ຊິດ. ໃຊ້ເວລາສ່ວນຕົວຢູ່ໂດດດ່ຽວໃຫ້ວອນອະທິຖານ ແລະຮ່ຳຮຽນພຣະຄຳຂອງພຣະອົງ.
2. ຮັບຜິດຊອບກັບຄວາມກ້າວໜ້າຝ່າຍວິນຍານຂອງຕົນເອງ. ຊັກຊວນຄົນອື່ນຊ່ວຍຮ່ວມເປັນຜູ້ຮັບຜິດຊອບສຸຂພາບຝ່າຍວິນຍານຂອງຕົນເອງນຳ.
3. ຈັດລຳດັບຄວາມສຳຄັນຂອງການກະທຳ ເພື່ອໃຫ້ເຫັນວ່າມີຄວາມຕັ້ງໃຈທີ່ຈະມຸ່ງໜ້າສູ່ການເດີນໄປຫາຄວາມເປັນຜູ້ໃຫຍ່ຝ່າຍວິນຍານ.
4. ໃຫ້ລະວັງພວກຢູດາຍສມັຍໃໝ່ ທີ່ມັກຈະເພີ້ມຂໍ້ບັງຄັບ, ກົດລະບຽບ, ວິທີການ, ພິທີກັມ ຫລືພື້ນຖານ ໃຫ້ເປັນເງື່ອນໄຂໃນການຮັບເອົາຄວາມພົ້ນ.
5. ຈົ່ງລະວັງຄວາມຄິດ, ໃຫ້ເອົາພຣະຄຳຂອງພຣະເຈົ້າເຂົ້າໄປໃນຈິດໃຈ ແລະຄິດແຕ່ສິ່ງທີ່ພໍພຣະທັຍພຣະເຈົ້າ.
6. ແນໃສ່ເປົ້າທີ່ຢູ່ສູງ ຕັ້ງຈຸດໝາຍວ່າຈະຕິດຕາມພຣະຄຣິດທຸກໆວັນ ແລະວ່າຕ້ອງເຂົ້າໃກ້ຊິດກັບພຣະອົງຢ່າງສນິດຕິດແທດ.

ໃນການເດີນທາງໄປ ອາຟຣິກາມາມໍ່ໆນີ້, ຂ້າພະເຈົ້າໄດ້ພົບຄົນແປພຣະຄັມພີໃນກຸ່ມວາຍຄລິບຄົນນຶ່ງ. ລາວໄດ້ເວົ້າວ່າ ມີຊາຍຄົນນຶ່ງທີ່ຮັບເອົາພຣະຄຳພຣະເຈົ້າ ແລະໄດ້ຮັບຄວາມທົນທຸກທໍຣະມານເປັນສິ່ງຕອບແທນ. ລາວໄດ້ເສັຽບ້ານເຮືອນ, ງົວຄວາຍຂອງລາວ, ແລະເພື່ອນມິດສະຫາຍທຸກຄົນ. ແຕ່ລາວກໍຍັງບໍ່ຍອມຮັບທີ່ຈະປະຕິເສດພຣະຄຣິດເພື່ອຈະໄດ້ຮັບເອົາມໍຣະດົກຄືນມາ. ສາມປີຕໍ່ມາ ລາວໃຊ້ຊີວິດອັນທຸກຈົນຢູ່ໃນໂລກ ແຕ່ມີຊີວິດຝ່າຍວິນຍານທີ່ຮັ່ງມີ. ຊາຍຄົນນີ້ເປັນນັກຮຽນພຣະຄັມພີທີ່ເອົາຈິງເອົາຈັງທີ່ສຸດ ແລະໄດ້ຕັ້ງໃຈທີ່ຢາກຈະຮູ້ຈັກກັບພຣະຄຣິດໃຫ້ດີຂຶ້ນ. ລາວໄດ້ນຳເອົາຄອບຄົວຂອງລາວທຸກໆຄົນມີຄວາມເຊື່ອໃນພຣະຄຣິດ ແລະສວຍເອົາທຸກໆໂອກາດບອກຄົນອື່ນກ່ຽວກັບພຣະເຢຊູ.

ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນwww.lsbf.org ໂດຍ BS